ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສຳເລັດກອງປະຊຸມວຽກງານກວດກາ ທຫລ







ກອງປະຊຸມວຽກງານກວດກາ ທະນາຄານແຫ່ງ ສປປ ລາວ (ທຫລ) ປະຈຳປີ 2019 ໄດ້ສຳເລັດລົງໃນວັນທີ 7 ສິງຫາ 2020 ຊຶ່ງດຳເນີນມາເປັນເວລາ 1 ວັນ ໂດຍພາຍໃຕ້ການເປັນປະທານຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ-ຜູ້ວ່າການ ທຫລ; ພ້ອມນີ້, ຍັງມີສະຫາຍ ໄຊຄຳ ອຸ່ນມີໄຊ ຮອງປະທານຄະນະກວດກາສູນກາງພັກ, ຮອງປະທານກວດກາລັດຖະບານ; ສະຫາຍ ພຸດທະໄຊ ສີວິໄລ ຄະນະປະຈຳພັກ, ຮອງຜູ້ວ່າການ ທຫລ, ປະທານຄະນະກວດກາພັກ ທຫລ, ບັນດາສະຫາຍຄະນະພັກ, ຄະນະຮາກຖານພັກ-ຄະນະໜ່ວຍພັກ ແລະ ພະນັກງານຫຼັກແຫຼ່ງທົ່ວອົງຄະນະພັກ ທຫລ ເຂົ້າຮ່ວມ.

ສະຫາຍນາງ ຂັນແກ້ວ ຫຼ້າມະນີເງົາ ຮອງປະທານຄະນະກວດກາພັກ ທຫລ-ຫົວໜ້າກົມບັນຊີ ແລະ ການເງິນ ໄດ້ນຳສະເໜີຮ່າງບົດສະຫຼຸບການເຄື່ອນໄຫວວຽກງານກວດກາ ທຫລ ປະຈຳປີ 2019 ທີ່ສ່ອງແສງໃຫ້ເຫັນບັນດາຜົນງານທີ່ພົ້ນເດັ່ນທີ່ຄະນະກວດກາຂອງ ທຫລ ສາມາດຍາດມາໄດ້ ເປັນຕົ້ນແມ່ນການຄົ້ນຄວ້າສ້າງ ແລະ ເຜີຍແຜ່-ໂຄສະນານິຕິກຳ; ການຕິດຕາມ, ກວດກາຮາກຖານພັກ-ໜ່ວຍພັກ ເພື່ອນຳສະເໜີຄະນະພັກ ທຫລ ພິຈາລະນາເອົາບັນດາຮາກຖານພັກ ເປັນໜ່ວຍພັກປອດໃສ ເຂັ້ມແຂງ ໜັກແໜ້ນ ຈຳນວນ 23 ໜ່ວຍພັກ. ພ້ອມນັ້ນ, ຍັງຕິດຕາມການດຳເນີນຊີວິດການເມືອງ ເພື່ອກ້າວເຂົ້າສູ່ກອງປະຊຸມໃຫຍ່ 3 ຂັ້ນ ແລະ ຕິດຕາມການກວດກາການເຄື່ອນໄຫວຂອງສະມາຊິກພັກ-ພະນັກງານໃນຂົງເຂດຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ ແລະ ເດັດຂາດເອົາສະມາຊິກພັກທີ່ເຊື່ອມຄຸນປ່ຽນທາດ ແລະ ລະເມີດຕໍ່ລະບຽບຫຼັກການອອກຈາກການຈັດຕັ້ງພັກຈຳນວນໜຶ່ງ; ການຕິດຕາມ, ກວດກາການບໍລິຫານລັດກໍ່ດຳເນີນເປັນປົກກະຕິ ສາມາດກວດກາທັງໝົດ 16 ເປົ້າໝາຍ ໃນນີ້ສຳເລັດການກວດກາທະນາຄານທຸລະກິດ 17 ແຫ່ງ, ກວດກາສະເພາະກິດ 4 ແຫ່ງ ແລະ ກວດກາສະຖາບັນການເງິນທັງໝົດ 104 ແຫ່ງ, ກວດກາສຸກເສີນສະຖາບັນການເງິນຈຸລະພາກ 7 ແຫ່ງ, ນອກນີ້ຍັງຮ່ວມກັບອົງການກວດກາລັດຖະບານ ດຳເນີນການກວດກາທະນາຄານທຸລະກິດລັດ 1 ແຫ່ງ ແລະ ທະນາຄານສະເພາະກິດ 1 ແຫ່ງ.

ກ່ຽວກັບການສະກັດກັ້ນ-ຕ້ານການສໍ້ລາດບັງຫຼວງກໍ່ໄດ້ມີການເຄື່ອນໄຫວຢ່າງແຂງແຮງ ແລະ ເປັນປົກກະຕິໂດຍຖືເປັນບັນຫາສຳຄັນ ແລະ ສອດຫ້ອຍໃນທຸກວຽກງານເພື່ອຕິດຕາມຊຸກຍູ້-ກວດກາ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃຫ້ມີປະສິດທິຜົນ, ມີຄວາມໂປ່ງໃສ ແລະ ທັນສະພາບການ. ໃນນີ້ໄດ້ສົມທົບກັບອົງການກວດກາລັດຖະບານເຄື່ອນໄຫວຕິດຕາມຊຸກຍູ້-ກວດກາວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງແຕ່ຫົວທີທົ່ວຂະແໜງການທະນາຄານ ແລະ ສາມາດແກ້ໄຂບັນດາປະກົດການຫຍໍ້ທໍ້ໄດ້ຈຳນວນໜຶ່ງ; ນອກນັ້ນ, ກໍ່ໄດ້ມີການຄົ້ນຄວ້າຄຳຮ້ອງ-ຄຳສະເໜີ ແລະ ປັບປຸງກົງຈັກການຈັດຕັ້ງ ແລະ ບຳລຸງກໍ່ສ້າງພະນັກງານໄດ້ເປັນຢ່າງດີ. ຈາກນັ້ນ, ກໍ່ໄດ້ຜ່ານທິດທາງແຜນການປີ 2020.






ກອງປະຊຸມ ຍັງໄດ້ຮັບຟັງການເຜີຍແຜ່ບົດສະຫຼຸບຫຍໍ້ການເຄື່ອນໄຫວວຽກງານກວດກາ ປີ 2019 ແລະ ທິດທາງແຜນການປີ 2020 ຂອງຄະນະກວດກາສູນກາງພັກ; ເຜີຍແຜ່ຂໍ້ກຳນົດວ່າດ້ວຍການຄົ້ນຄວ້າພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ. ຈາກນັ້ນ, ສະຫາຍ ສອນໄຊ ສິດພະໄຊ ເລຂາຄະນະພັກ ທຫລ ກໍ່ໄດ້ເຜີຍແຜ່ບົດໂອ້ລົມຂອງສະຫາຍ ປອ. ບຸນທອງ ຈິດມະນີ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຮອງນາຍົກລັດຖະມົນຕີ, ປະທານຄະນະກວດກາສູນກາງພັກ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ ຕໍ່ກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2019 ແລະ ໃນເວລາຕໍ່ມາກໍ່ໄດ້ມີການປະກອບຄວາມເຫັນຈາກຄະນະພັກທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນຫົວຂໍ້ການປັບປຸງວຽກງານກວດກາພາຍໃນໄລຍະໃໝ່; ຄະນະພັກທະນາຄານສົ່ງເສີມກະສິກຳປະກອບຄວາມເຫັນກ່ຽວກັບທິດທາງລວມໃນການແກ້ໄຂໜີ້ເສຍ (NPL); ຄະນະພັກທະນາຄານນະໂຍບາຍ ປະກອບຄວາມເຫັນກ່ຽວກັບການປະຕິບັດວຽກງານກວດກາໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ; ຄະນະພັກທະນາຄານພັດທະນາລາວ ປະກອບຄວາມເຫັນໃນຫົວຂໍ້ ການຈຳກັດ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ແລະ ຄະນະສາຂາ ທຫລ ແຂວງສະຫວັນນະເຂດ ປະກອບຄວາມເຫັນໃນວຽກງານສຸມໃສ່ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນຖັນແຖວສະມາຊິກພັກ-ພະນັກງານ.



ພ້ອມນັ້ນ, ຜູ້ແທນຂອງກອງປະຊຸມ ຍັງໄດ້ມີການປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານກວດກາ ທຫລ ປະຈຳປີ 2019, ທິດທາງແຜນການປີ 2020 ຢ່າງມີປະຊາທິປະໄຕ ເພື່ອຮັບປະກັນທິດນຳຂອງພັກທີ່ວ່າ: ວຽກງານກວດກາເປັນໜຶ່ງໃນພາລະບົດບາດ ແລະ ແບບແຜນການນຳພາຂອງພັກ "ບໍ່ມີການກວດກາ ກໍ່ໝາຍຄວາມວ່າ ບໍ່ມີການນຳພາ". ໃນຕອນທ້າຍທີ່ປະຊຸມຍັງໄດ້ຮັບຟັງການໂອ້ລົມຈາກສະຫາຍເລຂາຄະນະພັກ ທຫລ ຊຶ່ງສະຫາຍໄດ້ຕີລາຄາສູງຕໍ່ການເຄື່ອນໄຫວທີ່ຕັ້ງໜ້າຂອງຄະນະກວດກາຂອງ ທຫລ ໂດຍສະເພາະຕໍ່ພະນັກງານຂັ້ນນຳ ແລະ ຂັ້ນວິຊາການຂອງກົມກວດກາພາຍໃນຂອງ ທຫລ ທີ່ມີຄວາມຮັບຜິດຊອບສູງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຕົນ, ພ້ອມດຽວກັນນັ້ນ ກໍ່ໃຫ້ສືບຕໍ່ເສີມຂະຫຍາຍຈຸດດີທີ່ຕັ້ງໜ້າ ແລະ ປັບປຸງແກ້ໄຂຂໍ້ຄົງຄ້າງໃນໄລຍະຜ່ານມາ ເຮັດໃຫ້ປາກົດການຫຍໍ້ທໍ້ໃນຂະແໜງການທະນາຄານຫຼຸດໜ້ອຍລົງເປັນກ້າວໆ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**